ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້

ເລກທີ 2344/ກປ

ນະຄອນຫຼວງວຽງຈັນ, ລົງວັນທີ 30 JUN 2014

# ຄຳສັ່ງ

## ຂອງລັດຖະມົນຕີ

## ກ່ຽວກັບການຊຸກຍູ້ການຜະລິດກະສິກຳເປັນສິນຄ້າ

## ສົ່ງອອກສາທາລະນະລັດປະຊາຊົນຈີນ

ເຖິງ:
- ທ່ານ ຫົວໜ້າຫ້ອງການ, ກົມ ແລະສະຖາບັນອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;
- ທ່ານ ຫົວໜ້າພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ ແລະນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ.

- ອີງຕາມກົດໝາຍວ່າດ້ວຍການປ້ອງກັນພືດ ເລກທີ 06/ສພຊ, ລົງວັນທີ 09 ທັນວາ 2008;
- ອີງຕາມດຳລັດແນະນຳປະຕິບັດກົດໝາຍວ່າດ້ວຍການປ້ອງກັນພືດ ເລກທີ 229/ລບ, ລົງວັນທີ 31 ພຶດສະພາ 2012;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 262/ນຍ, ລົງວັນທີ 28 ມິຖຸນາ 2012 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງກະຊວງກະສິກຳ ແລະປ່າໄມ້;
- ອີງຕາມຂໍ້ຕົກລົງ ຂອງທ່ານນາຍົກລັດຖະມົນຕີ ເລກທີ 154/ນຍ, ລົງວັນທີ 12 ທັນວາ 2012 ກ່ຽວກັບການສົ່ງເສີມການປູກ ແລະສົ່ງອອກໝາກນ້ຳມັນສົບສອງພັນນາ;
- ອີງຕາມໜັງສືສະເໜີຂອງກົມປູກຝັງ ເລກທີ 0727/ກປຝ, ລົງວັນທີ 04 ມິຖຸນາ 2014.

ການປ່ຽນແປງໃໝ່ພາຍໃຕ້ການນຳພາຂອງພັກ ໃນຂະແໜງກະສິກຳ ແລະປ່າໄມ້ ແມ່ນກຳລັງດຳເນີນໄປໃນບັນຍາກາດລວມການພັດທະນາເສດຖະກິດ-ສັງຄົມຂອງຊາດໃນສະພາວະແຫ່ງໂລກາພິວັດແລະການເຊື່ອມໂຍງສາກົນ. ກຳລັງການຜະລິດກະສິກຳ ຂອງປະເທດພວກເຮົາມີທ່ວງທ່າຂະຫຍາຍຕົວແຂງແຮງດີພໍສົມຄວນ. ການຄ້າຂາຍສິນຄ້າກະສິກຳແມ່ນດຳເນີນໄປ ຕາມກົນໄກການຕະລາດເສລີຖືກກົດໝາຍ, ຊຶ່ງມີທັງກາລະໂອກາດ ແລະສິ່ງທ້າທາຍຫລາຍດ້ານ. ສະນັ້ນ ເພື່ອເຮັດໃຫ້ການຜະລິດກະສິກຳເປັນສິນຄ້າ ມີຄວາມໜັກແໜ້ນ, ໝັ້ນຄົງ ແລະ ສອດຄ່ອງ ກັບເງື່ອນໄຂຂອງຄູ່ສັນຍາຄ້າຂາຍ ແລະສາກົນ

### ລັດຖະມົນຕີວ່າການ ກະຊວງກະສິກຳ ແລະປ່າໄມ້ ອອກຄຳສັ່ງ:

1. ໃຫ້ ກົມປູກຝັງ ແລະພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ ແລະນະຄອນຫຼວງວຽງຈັນ ຊີ້ນຳຂະແໜງປູກຝັງ ໃນການຄຸ້ມຄອງວຽກງານ ແລະຂະບວນການຜະລິດພືດເປັນສິນຄ້າພາຍໃນແຂວງຂອງຕົນຢ່າງເຂັ້ມ

ກຸ່ມຕາມເຕັກນິກ ແລະລະບຽບການ; ສັງລວມບັນຊີລາຍຊື່ບັນດາທຸລະກິດ, ບໍລິສັດທີ່ດຳເນີນກິດຈະກຳດ້ານກະສິກຳ ແລະປ່າໄມ້; ຂຶ້ນບັນຊີການຜະລິດພືດ, ຜູ້ປູກ, ຜູ້ເກັບຊື້, ຜູ້ປຸງແຕ່ງເບື້ອງຕົ້ນ ລວມທັງວິທີການ ແລະເຄື່ອງມືທີ່ນຳໃຊ້ເຂົ້າໃນການປຸງແຕ່ງ (ການແກະ, ການສີ, ການອົບແຫ້ງ, ການແຍກປະເພດ, ການຫຸ້ມຫໍ່), ການຂົນສົ່ງ ແລະສາງເກັບມ້ຽນສິນຄ້າພືດ ເພື່ອກຽມພ້ອມເງື່ອນໄຂທາງດ້ານປະລິມານ ແລະຄຸນນະພາບສິນຄ້າກະສິກຳສົ່ງອອກສູ່ຕະຫຼາດ ສປ ຈີນ ເປັນຕົ້ນ ສາລີ, ກ້ວຍ, ໝາກໂມ, ມັນຕົ້ນ, ເຂົ້າສານ, ໝາກເດືອຍນ້ຳມັນ ແລະ ພືດອື່ນໆທີ່ສອງຝ່າຍກຳລັງຄົ້ນຄວ້ານຳສະເໜີ.

2. ໃຫ້ ກົມປູກຝັງ ແລະພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ ແລະນະຄອນຫຼວງວຽງຈັນ ໂຄສະນາເຜີຍແຜ່ຫລັກການ, ເຕັກນິກ, ວິຊາການ, ມາດຕະຖານດ້ານສຸຂານາໄມພືດ ແລະ ເງື່ອນໄຂໃນການສົ່ງອອກພືດໄປ ສປ ຈີນ ໃຫ້ແກ່ຜູ້ຜະລິດ ແລະຜູ້ປະກອບການສົ່ງອອກໄດ້ຮັບຊາບ ເຂົ້າໃຈຢ່າງທົ່ວເຖິງ ແລະຈັດຕັ້ງປະຕິບັດຢ່າງເຂັ້ມງວດ ໂດຍຮ່ວມກັນ:
   - ສ້າງແຜນການຜະລິດ ທີ່ຕິດພັນກັບຄວາມຕ້ອງການຂອງຕະຫຼາດປະເທດນຳເຂົ້າ ເລີ້ມຈາກຊຸກຍູ້ໃຫ້ມີການພົວພັນທຸລະກິດ ລະຫວ່າງຜູ້ປະກອບການສົ່ງອອກ-ນຳເຂົ້າຝ່າຍລາວ ແລະຄູ່ຄ້ານຳເຂົ້າ-ສົ່ງອອກຝ່າຍຈີນຢ່າງຈະແຈ້ງ;
   - ແຈ້ງບັນຊີລາຍການພືດສິນຄ້າ ແລະ ລາຍຊື່ຜູ້ປະກອບການ ແລະຄູ່ຄ້າ ທີ່ຝ່າຍລາວ ແລະ ຈີນຮັບຮູ້ ແລະແຈ້ງໃຫ້ກັນຊາບຢ່າງເປັນທາງການເປັນແຕ່ລະໄລຍະ ແລະ ຂັ້ນຕອນ, ວິທີການປະກອບເອກະສານສຸຂະນາໄມພືດ ຕາມທີ່ໄດ້ກຳນົດໄວ້ໃນສັນຍາລະຫວ່າງສອງປະເທດ ແລະ ໝວດທີ VI ຂອງກົດໝາຍວ່າດ້ວຍການປ້ອງກັນພືດ ກ່ຽວກັບການຄຸ້ມຄອງ ແລະ ກວດກາສຸຂະນາໄມພືດສິນຄ້າກະສິກຳ;
   - ປະສານກັບຂະແໜງການອຸດສະຫະກຳ ແລະ ການຄ້າ ເພື່ອຮັບຊາບເຖິງລາຍການສິນຄ້າ ແລະຈຳນວນຫລືໂກຕາສົ່ງອອກ-ນຳເຂົ້າ ແລະການປ່ຽນແປງແຕ່ລະປີ ຕາມສັນຍາຊື້-ຂາຍຕົວຈິງ ແລະຈະແຈ້ງກັບບໍລິສັດຜູ້ສົ່ງອອກ ແລະນຳເຂົ້າຂອງສອງປະເທດ ໃຫ້ຜູ້ຜະລິດແລະກຸ່ມຜະລິດຮັບຊາບ ເປັນແຕ່ລະໄລຍະ;

3. ໃຫ້ ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ ແລະນະຄອນຫຼວງວຽງຈັນ ຊີ້ນຳຂະແໜງປູກຝັງ, ຂະແໜງສົ່ງເສີມກະສິກຳ ແລະສະຫະກອນ, ສູນຄົ້ນຄວ້າກະສິກຳ ແລະປ່າໄມ້ ແລະໜ່ວຍງານສົ່ງເສີມກະສິກຳ ແລະສະຫະກອນ ລົງຊຸກຍູ້ສົ່ງເສີມການຜະລິດພືດເປັນສິນຄ້າ ເລີ້ມແຕ່ການປູກ ຈົນເຖິງປຸງແຕ່ງເບື້ອງຕົ້ນຂອງແຕ່ລະພືດທີ່ມີທ່າແຮງສົ່ງອອກ ໃຫ້ຖືກຕາມມາດຕະຖານເຕັກນິກການຜະລິດສິນຄ້າສົ່ງອອກ ແລະລະບຽບການດ້ານສຸຂານາໄມພືດ ທີ່ລັດຖະບານແຫ່ງ ສປປ ລາວ ແລະລັດຖະບານແຫ່ງ ສປ ຈີນ ໄດ້ເຊັນສັນຍາຮ່ວມກັນ.

4. ໃຫ້ ກົມປູກຝັງ ເພີ່ມທະວີການພົວພັນ, ຮ່ວມມື ກັບອົງການບໍລິຫານການຄຸ້ມຄອງ, ກວດກາຄຸນນະພາບ ແລະກັກກັນພືດແຫ່ງ ສປ ຈີນ (AQSIQ) ແລະເຈົ້າໜ້າທີ່ກວດກາ ແລະກັກກັນພືດຂອງ ສປ ຈີນ (CIQ) ປະຈຳດ່ານຊາຍແດນເຂົ້າ-ອອກ ເພື່ອພ້ອມກັນໂຄສະນາ, ເຜີຍແຜ່ ແລະສຶກສາອົບຮົມ ຜູ້ທີ່ສົ່ງອອກ-ນຳເຂົ້າສິນຄ້າພືດ ຜ່ານດ່ານທ້ອງຖິ່ນຕາມຊາຍແດນ ເປັນຕົ້ນແມ່ນ ດ່ານບໍ່ເຕັນ - ດ່ານບໍ່ຫານ, ເມືອງຫຼ້າ ກິ່ງສິບສອງພັນນາ, ແຂວງຢຸນນານ ຫຼືດ່ານອື່ນໆ ໃຫ້ທັນເຂົ້າສູ່ການປະຕິບັດລະບຽບການຢ່າງເຂັ້ມງວດ ຕາມສຳນັກງານຄຸ້ມຄອງກວດກາ ແລະ ກັກກັນພືດ (CIQ), ອົງການບໍລິຫານການຄຸ້ມຄອງ, ກວດກາຄຸນນະພາບ ແລະກັກກັນພືດແຫ່ງ ສປ ຈີນ (AQSIQ) ແລະ ກົມປູກຝັງແຫ່ງ ສປປ ລາວ ໄດ້ກຳນົດໄວ້ ໃນຂໍ້ກຳນົດເງື່ອນໄຂ ດ້ານສຸຂານາໄມການສົ່ງອອກຜະລິດຕະພັນພືດ ຂອງ ສປປ ລາວ ໄປ ສປ ຈີນ.

5. ມອບໃຫ້ ຫ້ອງການຕິດຕາມ ແລະບັນດາກົມ, ສະຖາບັນອ້ອມຂ້າງກະຊວງ, ພະແນກກະສິກຳ ແລະປ່າໄມ້ ປະຈຳແຂວງ ແລະນະຄອນຫຼວງວຽງຈັນ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ໃຫ້ມີຜົນສຳເລັດສູງ. ຜ່ານການຈັດຕັ້ງປະຕິບັດ ມີຂໍ້ສະດວກ, ຫຍຸ້ງຍາກແນວໃດ ໃຫ້ລາຍງານກອນນຳກະຊວງກະສິກຳ ແລະປ່າໄມ້ ຊາບເປັນປົກກະຕິ.

6. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້

ວິໄລວັນ ພົມເຂ

<u>ບ່ອນນຳສົ່ງ:</u>

| | |
|---|---|
| 1. ຫ້ອງວ່າການສູນກາງພັກ | 01 ສະບັບ (ເພື່ອລາຍງານ); |
| 2. ຫ້ອງວ່າການລັດຖະບານ | 01 ສະບັບ (ເພື່ອລາຍງານ); |
| 3. ກະຊວງອຸດສາຫະກຳ ແລະການຄ້າ | 01 ສະບັບ (ເພື່ອຊາບ); |
| 4. ຫ້ອງການຄະນະກຳມາທິການຮ່ວມມືລາວ-ຈີນ | 01 ສະບັບ (ເພື່ອຊາບ); |
| 5. ຫ້ອງວ່າການປົກຄອງແຂວງ, ນະຄອນຫຼວງວຽງຈັນ ບ່ອນລະ | 01 ສະບັບ (ເພື່ອຊ່ວຍຊຸກຍູ້); |
| 6. ເກັບມ້ຽນ | 01 ສະບັບ. |